ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟັກ (856-21) 213109, 213110

# ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງ ລັດຫວຽດນາມ ເພີ່ມທະວີໃນການຮ່ວມມື ແລະ ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ກ່ຽວກັບວຽກງານປັບປຸງນິຕິກໍາ

ຄະນະຈາກ ທະນາຄານແຫ່ງ ສປປ ລາວ ນໍາໂດຍທ່ານ ນາງ ຂັນແກ້ວ ຫຼ້າມະນີເງີາ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍ ທ່ານ ຮອງລັດຖະມົນຕີ ແລະ ຜູ້ຕາງໜ້າຈາກ ກໍາມາທິການກ່ຽວຂ້ອງຂອງສະພາແຫ່ງຊາດ, ສານປະຊາຊົນສູງສຸດ, ກະຊວງຍຸຕິທໍາ ແລະ ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ໄດ້ເດີນທາງໄປຢ້ຽມຢາມ ແລະ ເຂົ້າຮ່ວມສໍາມະນາແລກປ່ຽນບົດຮຽນໃນວຽກງານການຄຸ້ມຄອງທະນາຄານທຸລະກິດ ໃນລະຫວ່າງວັນທີ 08-09 ພຶດສະພາ 2023 ຢູ່ ທະນາຄານແຫ່ງລັດ ສສ. ຫວຽດນາມ ໂດຍການຕ້ອນຮັບຢ່າງອົບອຸ່ນຂອງ ທ່ານ ຫງວຽນ ກິມ ແອັງ, ຮອງຜູ້ວ່າການທະນາຄານແຫ່ງລັດ ສສ. ຫວຽດນາມ ພ້ອມດ້ວຍຜູ້ຕາງໜ້າຈາກກົມກົດໝາຍ, ອົງການກວດສອບ ແລະ ກວດກາການທະນາຄານ ແລະ ອົງການປະກັນໄພເງິນຝາກຫວຽດນາມ.



ຈຸດປະສົງຂອງການຢ້ຽມຢາມຄັ້ງນີ້, ແມ່ນເພື່ອແລກປ່ຽນບົດຮຽນກ່ຽວກັບນິຕິກຳ ແລະ ປະສົບການຕົວຈິງໃນການຄຸ້ມຄອງສະຖາບັນການເງິນ ໂດຍສະເພາະ ທະນາຄານທຸລະກິດໃນສະພາບເສດຖະກິດປັດຈຸບັນ ເພື່ອໝູນໃຊ້ເຂົ້າໃນການຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ລະບຽບການຕ່າງໆກ່ຽວຂ້ອງ ແນໃສ່ເຮັດໃຫ້ການເຄື່ອນໄຫວຂອງທະນາຄານທຸລະກິດມີຄວາມເຂັ້ມແຂງ ແລະ ຍືນຍົງ, ມີມາດຕະຖານແກ້ໄຂທີ່ທັນເວລາ ໃນກໍລະນີພົບວິກິດການ.

 

ການດຳເນີນສຳມະນາແລກປ່ຽນບົດຮຽນຄັ້ງນີ້, ທັງສອງຝ່າຍໄດ້ຍົກບັນຫາຕ່າງໆຂຶ້ນມາແລກປ່ຽນກັນຢ່າງກົງໄປ ກົງມາດ້ວຍບັນຍາກາດທີ່ຟົດຟື້ນ ແລະ ບັນລຸໄດ້ຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້ ໂດຍການນຳເອົາບົດຮຽນຢ່າງຫຼວງຫຼາຍ ແລະ ເປັນປະໂຫຍດ ທີ່ສາມາດນຳມາໝູນໃຊ້ເຂົ້າໃນວຽກງານປັບປຸງນິຕິກຳຄຸ້ມຄອງທະນາຄານທຸລະກິດ ຢູ່ ສປປ ລາວ. ພ້ອມກັນນັ້ນ, ກໍເຫັນວ່າການຢ້ຽມຢາມດັ່ງກ່າວມີຄວາມໝາຍຄວາມສຳຄັນຢ່າງຍິ່ງ ໃນການເພີ່ມພູນຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານຂອງພັກ, ລັດ ແລະ ປະຊາຊົນ ຂອງສອງຊາດ ລາວ - ສສ. ຫວຽດນາມ ໃຫ້ເຂົ້າສູ່ລວງເລິກ.

ກົມຄຸ້ມຄອງທະນາຄານທຸລະກິດ

***ຢູ່ເມືອງລາວໃຊ້ແຕ່ເງິນກີບ***